**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ

ສູນສະຖິຕິແຫ່ງຊາດ

ຫ້ອງການ

ເລກທີ: 2181 /ຫກ1.3

ວັນທີ 18 ຕຸລາ 2023

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

**ເຖິງ: ຫ້າງຮ້ານ,ວິສາຫະກິດທຸກພາກສ່ວນທີ່ກ່ຽວຂ້ອງ.**

ສູນສະຖິຕິແຫ່ງຊາດ, ກະຊວງ ແຜນການ ແລະ ການລົງທຶນ ໄດ້ຮັບທຶນຊ່ວຍເຫຼືອຈາກໂຄງການທະນາໂລກ ເພື່ອດໍາເນີນການສົມທຽບລາຄາການຈັດຊື້ ອຸປະກອນ ຮັບໃຊ້ການລົງສໍາຫລວດພາກສະໜາມ ສໍາຫຼວດ ການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ຂອງ ສປປ ລາວ **The Lao Expenditure and Consumption Survey (LECS) VII**) ຂອງໂຄງການສ້າງຄວາມອາດສາມາດລະບົບສະຖິຕິແຫ່ງຊາດໄລຍະ II (LAOSTAT II ) ຈຶ່ງແຈ້ງເຊີນມາຍັງຫ້າງຮ້ານ, ວິສາຫະກິດທຸກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງ ປະມູນສົມທຽບລາຄາ ສໍາລັບການຈັດຊື້ ອຸປະກອນ ຮັບໃຊ້ການລົງສໍາຫລວດພາກສະໜາມ ສໍາຫຼວດ **LECS VII**
2. ໄລຍະເວລາໃນການສົ່ງມອບແມ່ນ **21** ວັນ; **(ພາຍຫຼັງເຊັນສັນຍາ).**
3. ການປະມູນນີ້ຈະດໍາເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກໍານົດໄວ້ຢູ່ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017, ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄໍາແນະນໍາເພີ້ມເຕີມສໍາລັບມາດຕາ 23 ແລະ ມາດຕາ 31 ຂອງຄໍາແນະນໍາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທທີ 24 ມິຖຸນາ 2019. ບໍລິສັດ ຫຼື ຫ້າງຮ້ານສົນໃຈ ເຊີນຕິດຕໍ່ເອົາຊອງປະມູນ ນັບແຕ່ວັນທີ **19 ຕຸລາ 2023** ເຖິງ ວັນທີ **08ພະຈິກ 2023** ຕາມເວລາໂມງລັດຖະການ.
4. ຊອງສະເໜີລາຄາຈະຕ້ອງສົ່ງກ່ອນ ເວລາ **10:00** ໂມງ ຂອງ ວັນທີ **08 ພະຈິກ 2023** ແລະ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ **10:00** ໂມງ ຂອງມື້ດຽວກັນ ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຜູ້ທີ່ຍື່ນຊອງຕາງໜ້າບໍລິສັດທີ່ສົນໃຈຢາກເຂົ້າຮ່ວມ ທີ່ຫ້ອງປະຊຸມຊັ້ນ **3** ເບີ **311** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ສະຖານທີ່ບ້ານດົງນາໂຊກເໜືອ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ໂທ/ແຟັກ: (**+021 214740** ) ເຊິ່ງລາຍລະອຽດແມ່ນຄັດຕິດມາພ້ອມນີ້.

**ຫົວໜ້າຫ້ອງການ**

ສູນສະຖິຕິແຫ່ງຊາດ ຫ້ອງການ

**ພອງສະໝຸດ ຄໍາວານວົງສາ**

## ມາດຕະຖານເຕັກນິກທີ່ຕ້ອງການ (ສໍາລັບ/ຮ້ານບໍລິສັດ)

| ລ/ດ | ເນື້ອໃນລາຍການ | ຈໍານວນ | ມາດຖານເຕັກນິກຂອງສິນຄ້າ/ຫຼືການບໍລິການ ວຽກງານທີ່ຕ້ອງການ | ມາດຖານເຕັກນິກ ຂອງສິນຄ້າສະເໜີ ໂດຍຮ້ານ/ບໍລິສັດ |
|---|---|---|---|---|
| 1 | Raincoat ( ເສື້ອກັນຝົນ) | 250 | - ຊະນິດໜາ ລຸ້ນດີ<br>- ແບບເປັນຊຸດ ເສື້ອ ແລະ ໂສ້ງ | |
| 2 | Back pack ( ກະເປົາເປ້ນັກເດີນ) | 400 | - ກະເປົາເປ້<br>- ຂະໜາດ 25x35cm<br>- ກັນນໍ້າ, ສາມາດໃສ່ແລັບທ໋ອບໄດ້ (ພ້ອມມີສາຍສາກໂທລະສັບໃນໂຕ)<br>- ພິມໂລໂກ້1ຈຸດ 4ສີ (ຂະໜາດໂລໂກ້ 5x8cm) | |
| 3 | Jacket ( ເສື້ອກັກນັກເດີນ) | 600 | - ຜ້າ ຈ້ອງ<br>- ຊິບໃນ<br>- ພິມກາໂລໂກ້ສໍາຫຼອດ 1 ຈຸດ 4ສີ (ຂະໜາດໂລໂກ້ 4x7 cm)<br>- ມີຖົງ 2ຂ້າງ ແລະ ຊິບກາງ | |
| 4 | Polo shirt (ເສື້ອມີຄໍສີດໍາ) | 600 | - ຜ້າຄອດຕ້ອນ 100%<br>- ພິມກາໂລໂກ້ສໍາຫຼອດ 1 ຈຸດ 4ສີ (ຂະໜາດໂລໂກ້ 4x7 cm) | |
| 5 | Cap (ໝວກນັກເດີນ) | 300 | - ເນື້ອຜ້າຝ້າຍກໍາມະຍີ່<br>- ລວງຮອບຫມວກ 56-58 ຊມ<br>- ຄວາມຍາວປີກຫມວກ 7-9ຊມ | |
| 6 | Net (ມຸ້ງ ຍ້ອມຢາກັນຍຸງ) | 250 | - ຂະໜາດ 1,20 * 2 ແມັດ<br>- ມຸ້ງຍ້ອມຢາ<br>- ມີໂຄງ ສາມາດພັບໄດ້ | |
| 7 | Flashlight (ໄຟສາຍມີສາຍສາກ) | 250 | - ລຸ້ນເປັນເຫລັກ<br>- ປັບເລນກ້ວາງ ແຄບໄດ້<br>- ແບບສາກແລະໃສ່ຖ່ານໄດ້ | |
| 8 | Boots ( ເກີບບູດ ) | 250 | - ຢາງຫນາອ່ອນ<br>- ສູງ 13ນີ້ວ<br>- ສົ້ນເກີບສູງ3.5ຊມ | |

ຫົວໜ້າຫ້ອງການ

ຫ້ອງການ ຫໍສະໝຸດ ຄໍາວານວົງສ...